ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ ເລກທີ 05/ຄກສພ

ນະຄອນຫຼວງວຽງຈັນ, ວັນທີ 05 ມັງກອນ 2018

# ຂໍ້ກຳນົດ
# ວ່າດ້ວຍການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ

- ອີງຕາມ ກົດລະບຽບຂອງພັກ ສະໄໝທີ X ມາດຕາ 44 ວ່າດ້ວຍວຽກງານຕິດຕາມ, ກວດກາຂອງພັກ
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ)
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບ ເລກທີ 021/ກມສພ, ລົງວັນທີ 27/12/2016 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກວດກາສູນກາງພັກ
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 146/ນຍ, ລົງວັນທີ 8/5/2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດຖະບານ

ເພື່ອເຮັດໃຫ້ວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ, ມີຄວາມເປັນເອກະພາບ ແລະ ດຳເນີນໄປຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

## ຄະນະກວດກາສູນກາງພັກ ອອກຂໍ້ກຳນົດ:
## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

1. ເພື່ອໃຫ້ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາແຕ່ລະຂັ້ນຮັບຮູ້-ເຂົ້າໃຈເປັນເອກະພາບ ແລະ ເຫັນໄດ້ຄວາມຈຳເປັນຂອງການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາ

2. ເຮັດໃຫ້ການຈັດຕັ້ງປະຕິບັດຜົນການກວດກາທີ່ຄະນະພັກ, ອົງການປົກຄອງແຕ່ລະຂັ້ນຕົກລົງແກ້ໄຂໄດ້ຮັບການຈັດຕັ້ງປະຕິບັດ, ມີຜົນສັກສິດ, ເຂັ້ມງວດ, ທັນການ, ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

3. ເຮັດໃຫ້ຄະນະພັກ, ອົງການປົກຄອງ, ຄະນະກວດກາ ແລະ ເປົ້າໝາຍທີ່ຖືກກວດກາຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາ ຕາມພາລະບົດບາດ, ໜ້າທີ່ ແລະ ສິດຂອງຕົນທີ່ກຳນົດໄວ້ໃນກົດລະບຽບຂອງພັກ, ກົດໝາຍກວດກາລັດ ແລະ ລະບຽບການອື່ນໆ.

## ມາດຕາ 2 ຄວາມໝາຍ

1. ຜົນຂອງການກວດກາແມ່ນການຕົກລົງເຫັນດີເປັນເອກະພາບຂອງຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ ຕໍ່ບົດສະຫຼຸບການກວດກາແຕ່ລະເປົ້າໝາຍທີ່ໄດ້ຕົກລົງແກ້ໄຂຕາມຂໍ້ມູນຫຼັກຖານທີ່ໄດ້ວິເຄາະວິໄຈຜ່ານການກວດກາ.

2. ການຕິດຕາມ, ກວດກາການຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາ ແມ່ນການເກັບກຳຂໍ້ມູນ, ສັງເກດຕີລາຄາຄືນ ການປະຕິບັດໜ້າທີ່-ສິດຂອງຄະນະພັກ, ອົງການປົກຄອງ, ຄະນະກວດກາແຕ່ລະຂັ້ນ ແລະ ເປົ້າໝາຍທີ່ຖືກກວດກາໃນການແກ້ໄຂຜົນຂອງການກວດກາທີ່ຄະນະພັກ, ອົງການປົກຄອງແຕ່ລະຂັ້ນໄດ້ຕົກລົງຮັບຮອງ.

3. ການຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາແມ່ນການສຶກສາອົບຮົມ, ລົງວິໄນ, ລົງໂທດຕໍ່ການຈັດຕັ້ງ ແລະ ບຸກຄົນ, ເກັບກູ້ຊັບສິນທີ່ເສຍຫາຍຄືນມາໃຫ້ລັດ, ລວມໝູ່ ແລະ ພົນລະເມືອງຕາມຜົນຂອງການກວດກາທີ່ຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນໄດ້ຕົກລົງຮັບຮອງ.

4. ການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາ ແມ່ນຄວາມຈຳເປັນພາວະວິໄສ, ເມື່ອດຳເນີນການກວດກາແລ້ວຕ້ອງໄດ້ຮັບການແກ້ໄຂຕາມຜົນຂອງການກວດກາ, ຖ້າບໍ່ແກ້ໄຂກໍ່ເຮັດໃຫ້ການກວດກາບໍ່ມີຜົນສັກສິດ, ກົດໝາຍ ແລະ ລະບຽບການຕ່າງໆ ທີ່ໄດ້ຮັບຮອງກໍ່ບໍ່ໄດ້ຮັບການຈັດຕັ້ງປະຕິບັດ.

## ມາດຕາ 3 ເປົ້າໝາຍນຳໃຊ້

ຂໍ້ກຳນົດສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ, ນິຕິບຸກຄົນ ແລະ ບຸກຄົນ ທີ່ພົວພັນເຖິງການຈັດຕັ້ງປະຕິບັດຜົນຂອງການກວດກາທີ່ໄດ້ຕົກລົງຮັບຮອງຈາກຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ.

**ມາດຕາ 4 ຫຼັກການ**

1. ການຈັດຕັ້ງປະຕິບັດຜົນການກວດກາຕ້ອງປະຕິບັດຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດ.

2. ຮັບປະກັນເຮັດໃຫ້ຜົນຂອງການກວດກາໄດ້ຮັບການແກ້ໄຂຖືກຕ້ອງ, ຊັດເຈນ, ຍຸຕິທຳ, ເຂັ້ມງວດ, ທັນເວລາ ແລະ ເປີດເຜີຍ.

3. ມີການປະສານສົມທົບແໜ້ນກັບການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງເພື່ອຮັບປະກັນຄວາມເປັນເອກະພາບ, ຄວາມສັກສິດ ແລະ ປະສິດທິພາບໃນການຈັດຕັ້ງປະຕິບັດຜົນການກວດກາ.

4. ຖືເອົາການສຶກສາອົບຮົມເປັນຕົ້ນຕໍ ແລະ ປະຕິບັດມາດຕະການຕາມລະບຽບກົດໝາຍເປັນສຳຄັນ ແລະ ຈຳເປັນ.

## ໝວດທີ II
## ໜ້າທີ່ ແລະ ສິດ ໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ

**ມາດຕາ 5 ໜ້າທີ່ ແລະ ສິດ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານ**

1. ເປັນເສນາທິການ ໃຫ້ສູນກາງພັກ ແລະ ລັດຖະບານກ່ຽວກັບວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາທີ່ກົມການເມືອງ, ຄະນະເລຂາທິການ ແລະ ລັດຖະບານໄດ້ຕົກລົງ.

2. ອອກບົດແນະນຳ, ຄຳສັ່ງ, ແຈ້ງການ ແລະ ນິຕິກຳອື່ນໆ ກ່ຽວກັບການຈັດຕັ້ງປະຕິບັດຜົນຂອງການກວດກາ.

3. ຊີ້ນຳ-ນຳພາ ວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາ ໃນຂອບເຂດທົ່ວປະເທດ.

4. ຕິດຕາມ ກວດກາ ແລະ ຊຸກຍູ້ ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາແຕ່ລະຂັ້ນປະຕິບັດແກ້ໄຂຜົນຂອງການກວດກາໃຫ້ເຂັ້ມງວດ, ທັນການ ແລະ ຖືກຕ້ອງຕາມທີ່ໄດ້ຕົກລົງ.

5. ຄົ້ນຄວ້າສະເໜີວິທີການ, ມາດຕະການຕໍ່ການຈັດຕັ້ງ ແລະ ບຸກຄົນທີ່ບໍ່ປະຕິບັດແກ້ໄຂຜົນຂອງການກວດກາ ຫຼື ປະຕິບັດບໍ່ຖືກຕ້ອງຕາມທີ່ໄດ້ຕົກລົງ.

6. ເກັບກຳຂໍ້ມູນ, ສະຖິຕິຜົນການກວດກາແຕ່ລະເປົ້າໝາຍ, ສະຫຼຸບສັງລວມ ການແກ້ໄຂຜົນຂອງການກວດກາໃນຂອບເຂດທົ່ວປະເທດຕາມຄວາມຮັບຜິດຊອບຂອງຕົນ.

7. ປະສານສົມທົບກັບການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຜົນຂອງການກວດກາຕາມພາລະບົດບາດຂອງຕົນ.

## ມາດຕາ 6 ໜ້າທີ່ ແລະ ສິດ ຂອງຄະນະພັກ-ຄະນະນຳກະຊວງ-ອົງການ, ແຂວງ, ນະຄອນຫຼວງ ແລະ ເມືອງ

1. ອອກຂໍ້ຕົກລົງດຳເນີນການກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາແຕ່ລະເປົ້າໝາຍກໍລະນີເຫັນວ່າບໍ່ປະຕິບັດ ຫຼື ປະຕິບັດບໍ່ຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ຕາມການຕົກລົງແກ້ໄຂຜົນຂອງການກວດກາ.

2. ຕົກລົງມາດຕະການແກ້ໄຂຜົນຂອງການກວດກາ ຕໍ່ເປົ້າໝາຍທີ່ໄດ້ກວດກາ ເຫັນວ່າບໍ່ແກ້ໄຂຜົນຂອງການກວດກາທີ່ຄະນະພັກຂັ້ນຂອງຕົນ ແລະ ຂັ້ນເທິງໄດ້ຕົກລົງ ຕາມການສະເໜີຂອງຄະນະກວດກາຂັ້ນຂອງຕົນ.

3. ຕິດຕາມ, ຊີ້ນຳ ແລະ ຊຸກຍູ້ ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ເປົ້າໝາຍທີ່ຖືກກວດກາໃນການຈັດຕັ້ງປະຕິບັດຜົນຂອງການກວດກາຕາມຄະນະພັກ, ອົງການປົກຄອງຂັ້ນຂອງຕົນ ແລະ ຂັ້ນເທິງໄດ້ຕົກລົງ.

4. ຊີ້ນຳ-ນຳພາຄະນະກວດກາຂັ້ນຂອງຕົນ ປະຕິບັດໜ້າທີ່ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາໃຫ້ເປັນປົກກະຕິ.

## ມາດຕາ 7 ໜ້າທີ່ ແລະ ສິດ ຂອງຄະນະກວດກາພັກ, ອົງການກວດກາລັດ ກະຊວງ-ອົງການ, ແຂວງ, ນະຄອນຫຼວງ ແລະ ເມືອງ

1. ເປັນເສນາທິການໃຫ້ຄະນະພັກ, ອົງການປົກຄອງຂັ້ນຂອງຕົ້ນ ກ່ຽວກັບວຽກງານຕິດຕາມ, ກວດກາການຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາທີ່ຄະນະພັກ, ອົງການປົກຄອງຂັ້ນຂອງຕົນ ແລະ ຂັ້ນເທິງໄດ້ຕົກລົງ.

2. ຕິດຕາມ ກວດກາ, ຊຸກຍູ້ ຄະນະພັກ, ອົງການປົກຄອງ, ຄະນະກວດກາຂັ້ນຂອງຕົນ ແລະ ຂັ້ນລຸ່ມ ຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາ ຕາມຄວາມຮັບຜິດຊອບຂອງແຕ່ລະຂັ້ນເປັນຕົ້ນແມ່ນການລົງວິໄນ ຫຼື ລົງໂທດຕໍ່ການຈັດຕັ້ງ ແລະ ບຸກຄົນ, ເກັບກູ້ຊັບສິນທີ່ເສຍຫາຍຄືນມາໃຫ້ລັດ, ລວມໝູ່ ແລະ ພົນລະເມືອງ ຕາມການຕົກລົງແກ້ໄຂຜົນຂອງການກວດກາ.

3. ຄົ້ນຄວ້າສະເໜີທີການ ແລະ ມາດຕະການແກ້ໄຂການປະຕິບັດຜົນຂອງການກວດກາໃຫ້ຄະນະພັກ, ອົງການປົກຄອງພິຈາລະນາຕົກລົງໃນເມື່ອເຫັນວ່າ ເປົ້າໝາຍຖືກກວດກາ ແລະ ການຈັດຕັ້ງທີ່ເປົ້າໝາຍຖືກກວດກາຂຶ້ນກັບ ບໍ່ແກ້ໄຂຜົນຂອງການກວດກາຕາມທີ່ໄດ້ຕົກລົງ.

4. ເກັບກຳຂໍ້ມູນ, ສະຖິຕິຜົນການກວດກາແຕ່ລະເປົ້າໝາຍ, ສະຫຼຸບສັງລວມ ການແກ້ໄຂຜົນຂອງການກວດກາຕາມຄວາມຮັບຜິດຊອບຂອງຕົນ.

5. ປະສານສົມທົບກັບການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຜົນຂອງການກວດກາຕາມພາລະບົດບາດຂອງຕົນ.

**ມາດຕາ 8 ໜ້າທີ່ ແລະ ສິດ ຂອງເປົ້າໝາຍປະຕິບັດຜົນຂອງການກວດກາ**

1. ຈັດຕັ້ງປະຕິບັດຜົນຂອງການກວດກາ ໃຫ້ຖືກຕ້ອງຄົບຖ້ວນຕາມການຕົກລົງຂອງຄະນະພັກ, ອົງການປົກຄອງຂັ້ນຂອງຕົນ, ຕາມກົດລະບຽບພັກ ແລະ ກົດໝາຍໄດ້ກຳນົດໄວ້.

2. ລາຍງານຜົນການຈັດຕັ້ງປະຕິບັດ ການແກ້ໄຂຜົນຂອງການກວດກາໃຫ້ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາຂັ້ນຂອງຕົນຮັບຊາບຕາມກົດລະບຽບຂອງພັກ ແລະ ກົດໝາຍໄດ້ກຳນົດໄວ້.

3. ສະເໜີໃຫ້ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາ ທີ່ອອກຂໍ້ຕົກລົງແກ້ໄຂຜົນການກວດກາ, ອະທິບາຍ ແລະ ຊີ້ແຈງຄືນບັນຫາໃດທີ່ບໍ່ທັນແຈ້ງຕໍ່ການແກ້ໄຂຜົນຂອງການກວດກາ.

4. ປະສານສົມທົບກັບການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຜົນຂອງການກວດກາ, ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ຕາມການຕົກລົງຂອງຂັ້ນເທິງຕໍ່ການແກ້ໄຂຜົນຂອງການກວດກາ.

## ໝວດທີ III
## ເນື້ອໃນ, ຂັ້ນຕອນການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ

**ມາດຕາ 9 ເນື້ອໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ**

ການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາແມ່ນ ການປະຕິບັດບັນດາຂໍ້ຕົກລົງ, ແຈ້ງການ, ບົດບັນທຶກ, ຄຳຕັດສິນຂອງສານ ແລະ ນິຕິກຳອື່ນໆທີ່ຄະນະພັກແລະ ອົງການປົກຄອງແຕ່ລະຂັ້ນໄດ້ຕົກລົງແກ້ໄຂ.

**ມາດຕາ 10 ຂັ້ນຕອນຂອງການຕິດຕາມ ການຈັດຕັ້ງປະຕິບັດຜົນການກວດກາ**

1. ສ້າງແຜນການເຄື່ອນໄຫວຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການກວດກາແຕ່ລະເປົ້າໝາຍທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

2. ເກັບກຳສະຖິຕິຜົນຂອງການກວດກາທີ່ຄະນະພັກ, ອົງການປົກຄອງຂັ້ນຂອງຕົນ ແລະ ຂັ້ນເທິງໄດ້ຕົກລົງແກ້ໄຂ.

3. ເຊີນການຈັດຕັ້ງທີ່ກ່ຽວຂ້ອງ ແລະ ເປົ້າໝາຍທີ່ຖືກກວດກາ ມາລາຍງານສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ມູນຕ່າງໆໃນການຈັດຕັ້ງປະຕິບັດຜົນຂອງການກວດກາ.

4. ຊຸກຍູ້ຄະນະພັກ, ອົງການປົກຄອງ ແລະ ເປົ້າໝາຍທີ່ຖືກກວດກາ ສືບຕໍ່ປະຕິບັດຜົນຂອງການກວດກາ ທີ່ບໍ່ທັນສຳເລັດໃນກຳນົດເວລາທີ່ຈະແຈ້ງ-ແນ່ນອນ.

5. ສະຫຼຸບລາຍງານຜົນການຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດຜົນຂອງການກວດກາແຕ່ລະເປົ້າໝາຍໃຫ້ຄະນະພັກ, ອົງການປົກຄອງຂັ້ນຂອງຕົນເພື່ອຮັບຊາບ ແລະ ມີທິດຊີ້ນຳ.

6. ຜ່ານການຕິດຕາມ, ຊຸກຍູ້ ຫາກເຫັນວ່າເປົ້າໝາຍຖືກກວດກາບໍ່ປະຕິບັດ ຫຼື ປະຕິບັດບໍ່ຖືກຕ້ອງຕາມການຕົກລົງແກ້ໄຂ ຕ້ອງໄດ້ສະເໜີຄະນະພັກ, ອົງການປົກຄອງຂັ້ນຂອງຕົນ ອອກຂໍ້ຕົກລົງດຳເນີນການກວດກາ,

**ມາດຕາ 11 ຂັ້ນຕອນການກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ**

**ກ ຂັ້ນຕອນກະກຽມ**

1. ແຕ່ງຕັ້ງໜ່ວຍງານ ຫຼື ພະນັກງານ ດຳເນີນການກວດກາການຈັດຕັ້ງປະຕິບັດຜົນຂອງກວດກາ.
2. ກະກຽມເອກະສານ, ຂໍ້ມູນ, ສະຖິຕິ ການຕົກລົງແກ້ໄຂຜົນຂອງການກວດກາແຕ່ລະເປົ້າໝາຍ.
3. ສ້າງແຜນການດຳເນີນການກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ.
4. ຈັດຕັ້ງແນະນຳພະນັກງານທີ່ຖືກແຕ່ງຕັ້ງໃຫ້ກຳແໜ້ນຈຸດປະສົງ-ຄາດໝາດ ແລະ ເນື້ອໃນການກວດກາການຈັດຕັ້ງປະຕິບັດຜົນຂອງການກວດກາ.
5. ກະກຽມງົບປະມານ, ພາຫະນະ ແລະ ເງື່ອນໄຂຕ່າງໆ ສຳລັບການເຄື່ອນໄຫວກວດກາ.

**ຂ. ຂັ້ນຕອນດຳເນີນ**

1. ແຈ້ງຂໍ້ຕົກລົງ, ແຜນການຕໍ່ການຈັດຕັ້ງ ແລະ ເປົ້າໝາຍທີ່ຖືກກວດກາຮັບຊາບ ແລະ ກະກຽມຊີ້ແຈ້ງກ່ອນການດຳເນີນການກວດກາລ່ວງໜ້າ 7 ວັນ (ໃນວັນລັດຖະການ ). ຄົ້ນຄວ້າຂໍ້ຕົກລົງ ຫຼື ແຈ້ງການກ່ຽວກັບການແກ້ໄຂຜົນຂອງການກວດກາ ທີ່ພົວພັນເຖິງແຕ່ລະກໍລະນີຂອງເປົ້າໝາຍຖືກກວດກາ.

2. ຮັບຟັງການລາຍງານສະພາບ ຫຼື ຊີ້ແຈງການປະຕິບັດຜົນຂອງການກວດກາຈາກການຈັດຕັ້ງ ແລະເປົ້າໝາຍຖືກກວດກາ ພ້ອມທັງທວງເອົາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆທີ່ກ່ຽວຂ້ອງ ຖ້າເຫັນວ່າມີຄວາມຈຳເປັນ.

3. ຄົ້ນຄວ້າວິໄຈຄືນຂໍ້ມູນ ແລະ ສະພາບການຈັດຕັ້ງປະຕິບັດຜົນຂອງການກວດກາ, ລົງກວດກາຕົວຈິງສະຖານທີ່, ຊຸບສົນ ແລະ ບັນຫາອື່ນໆທີ່ເຫັນວ່າຈຳເປັນ.

4. ຄົ້ນຄວ້າປຶກສາຫາລືວິທີການ ແລະ ມາດຕະການແກ້ໄຂ ໃຫ້ສອດຄ່ອງກັບການຕົກລົງແກ້ໄຂຜົນຂອງການກວດກາທີ່ຂັ້ນເທິງໄດ້ຕົກລົງ.

5. ສ້າງບົດບັນທຶກຜົນການກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ກັບເປົ້າໝາຍທີ່ຖືກກວດກາ.

**ຄ ຂັ້ນຕອນການສະຫຼຸບລາຍງານ**

1. ສັງລວມເອກະສານ, ຂໍ້ມູນຕ່າງໆ ທີ່ພົວພັນເຖິງການຈັດຕັ້ງປະຕິບັດຜົນຂອງການກວດກາ.

2. ສະຫຼຸບຜົນການກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ, ສະເໜີວິທີການ ແລະມາດຕະການສືບຕໍ່ແກ້ໄຂຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ຕາມການຕົກລົງຂອງຄະນະພັກຂັ້ນຕົນ ແລະ ຄະນະພັກຂັ້ນເທິງ.

3. ລາຍງານໃຫ້ຜູ້ອອກຂໍ້ຕົກລົງແກ້ໄຂຜົນຂອງການກວດກາ ແລະ ຄະນະກວດກາຂັ້ນເທິງພິຈາລະນາ ແລະ ມີທິດຊີ້ນຳ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 12 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ການຈັດຕັ້ງ ຫຼື ບຸກຄົນ ທີ່ໄດ້ເຂົ້າຮ່ວມໃນການປະຕິບັດຂໍ້ກຳນົດສະບັບນີ້ຈະໄດ້ຮັບນະໂຍບາຍ, ຍ້ອງຍໍ, ປົກປ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

### ມາດຕາ 13 ມາດຕະການຕໍ່ຜູ້ລະເມີດ

ການຈັດຕັ້ງ ຫຼື ບຸກຄົນ ທີ່ລະເມີດຂໍ້ກຳນົດສະບັບນີ້ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ ຫຼື ດຳເນີນຄະດີຕາມກຳລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດໄດ້ກຳນົດໄວ້.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ.**

ຄະນະພັກ, ອົງການປົກຄອງ, ຄະນະກວດກາແຕ່ລະຂັ້ນ ຕ້ອງຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນ, ເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານຮັບຮູ້-ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

ຜ່ານການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້, ຖ້າມີຄວາມຫຍຸ້ງຍາກ ໃຫ້ລາຍງານຄະນະກວດກາສູນກາງພັກ, ອົງການກວດກາລັດຖະບານ ເພື່ອຊີ້ນຳ, ປັບປຸງ ແລະ ແກ້ໄຂທັນເວລາ.

**ມາດຕາ 15 ຜົນສັກສິດ**

ຂໍ້ກຳນົດສະບັບນີ້, ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກວດກາສູນກາງພັກ**

**ປອ ບຸນທອງ ຈິດມະນີ**